ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

4115

ເລກທີ.........................../ກງ

ນະຄອນຫລວງວຽງຈັນ,ລົງວັນທີ 12 DEC 2016

# ບົດແນະນຳ

## ວ່າດ້ວຍການຄຸ້ມຄອງການສົ່ງອອກ-ນຳເຂົ້າ ສິນຄ້າ, ເຄື່ອງຂອງ ຜ່ານດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງເລກທີ: 04/ສພຊ, ລົງວັນທີ: 20 ທັນວາ 2011 ແລະ ສະບັບປັບປຸງບາງມາດຕາ ເລກທີ: 57/ສພຊ, ລົງວັນທີ: 24 ທັນວາ 2014;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມ ແຈ້ງການຂອງ ກະຊວງການເງິນ, ສະບັບເລກທີ 1587/ກງ, ລົງວັນທີ 26 ພຶດສະພາ 2016.

ເພື່ອຮັບປະກັນການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງ ສິນຄ້າເຄື່ອງຂອງ ທີ່ສົ່ງອອກ-ນຳເຂົ້າຜ່ານດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ ໃຫ້ມີຄວາມເອກະພາບໃນຂອບເຂດທົ່ວປະເທດ, ຖືກຕ້ອງຕາມກົດໝາຍວ່າດ້ວຍພາສີ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ

## ກະຊວງການເງິນ ອອກບົດແນະນຳ :

1. ຈຸດປະສົງ

ບົດແນະນຳສະບັບນີ້ ວາງອອກເພື່ອກຳນົດຫຼັກການ ແລະ ວິທີການ ຄຸ້ມຄອງ ຈັດເກັບຄ່າພາສີ-ອາກອນ ແລະ ພັນທະອື່ນ ໃນການສົ່ງອອກ-ນຳເຂົ້າ ສິນຄ້າເຄື່ອງຂອງ ເຂົ້າງົບປະມານແຫ່ງລັດ ມີປະສິດທິຜົນ ແລະ ສ້າງຄວາມເຂັ້ມແຂງໃຫ້ບັນດາເມືອງທີ່ນອນຢູ່ໃນວຽກງານສາມສ້າງ ສາມາດສ້າງເງື່ອນໄຂທາງດ້ານງົບປະມານ ແລະ ເພື່ອຈັດຕັ້ງປະຕິບັດຕາມເນື້ອໃນຂອງມາດຕາ 8 ຂອງກົດໝາຍວ່າດ້ວຍພາສີ ໃນການຄວບຄຸມທາງພາສີ ແນໃສ່ເພີ່ມທະວີໃນການຄຸ້ມຄອງ, ຄວບຄຸມ ຕໍ່ການຈັດເກັບຄ່າພາສີ-ອາກອນ ແລະ ພັນທະອື່ນ ຢູ່ຕາມດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ ໃຫ້ມີຄວາມເປັນເອກະພາບໃນການຄຸ້ມຄອງດ້ານວິຊາສະເພາະ ລວມສູນຕາມສາຍຕັ້ງຂອງຂະແໜງການເງິນໃນຂອບເຂດທົ່ວປະເທດ, ຫຼີກເວັ້ນຊ່ອງຫວ່າງໃນການຄຸ້ມຄອງຈັດເກັບລາຍຮັບງົບປະມານ ແລະ ທັງເປັນການສ້າງເງື່ອນໄຂໃຫ້ອົງການປົກຄອງທ້ອງຖິ່ນ ໃຫ້ມີການຄຸ້ມຄອງຕາມກົດໝາຍ ແລະ ລະບຽບການກຳນົດ.

2. ການກຳນົດປະເພດສິນຄ້າ, ເຄື່ອງຂອງສົ່ງອອກ-ນຳເຂົ້າ ຜ່ານດ່ານພາສີທ້ອງຖິ່ນ

ສິນຄ້າ, ເຄື່ອງຂອງ ແລະ ອຸປະກອນໄດ້ຮັບອະນຸຍາດໃຫ້ສົ່ງອອກ-ນຳເຂົ້າ, ແຈ້ງເສຍພາສີ-ອາກອນ, ພັນທະອື່ນ, ເພື່ອຈັດເກັບພາສີ-ອາກອນ ຢູ່ຕາມດ່ານພາສີທ້ອງຖິ່ນ ມີລາຍລະອຽດດັ່ງນີ້:

1.1 ສິນຄ້າ, ເຄື່ອງຂອງອຸປະໂພກ, ບໍລິໂພກ, ຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ທີ່ອາໃສຢູ່ຕາມຂອບເຂດທ້ອງຖິ່ນ ທີ່ມີດ່ານຖາວອນຕັ້ງຢູ່;

1.2 ຍານພາຫະນະຮັບໃຊ້ການຜະລິດທາງກິ່ງຂະໜາດນ້ອຍ, ກົນຈັກກະສິກຳຂະໜາດນ້ອຍ, ວັດຖຸອຸປະກອນຮັບໃຊ້ໃນການບໍລິການ, ການຜະລິດທາງດ້ານກະສິກຳ ທີ່ໄດ້ຮັບອະນຸຍາດນຳເຂົ້າ ຈາກຂະແໜງການທີ່ກ່ຽວຂ້ອງ, ເຊັ່ນ:

+ ລົດໄຖນາເດີນຕາມ;
+ ຈັກສູບນ້ຳ;
+ ຈັກຟາດເຂົ້າ;
+ ໂຮງສີເຂົ້າ;
+ ແນວພັນພືດ;
+ ຝຸ່ນວິທະຍາສາດ;
+ ຢາປາບສັດຕູພືດ;
+ ອາຫານສັດ
+ ວັດຖຸອຸປະກອນຮັບໃຊ້ການຜະລິດກະສິກຳ (ປູກຝັງ ແລະ ລ້ຽງສັດ) ແລະ
+ ວັດຖຸອຸປະກອນຮັບໃຊ້ໃນການປະມົງຂອງທ້ອງຖິ່ນ.

3. ການກຳນົດປະເພດສິນຄ້າ, ເຄື່ອງຂອງສົ່ງອອກ-ນຳເຂົ້າ ຜ່ານດ່ານພາສີປະເພນີ

ສິນຄ້າ, ເຄື່ອງຂອງ ທີ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າ, ແຈ້ງເສຍພາສີ-ອາກອນ, ພັນທະອື່ນ, ເພື່ອຈັດເກັບພາສີ - ອາກອນ ຢູ່ຕາມດ່ານພາສີປະເພນີ ມີລາຍລະອຽດດັ່ງນີ້:

1.1 ສິນຄ້າ, ເຄື່ອງຂອງອຸປະໂພກ, ບໍລິໂພກ ຫຼື ວັດຖຸອຸປະກອນ ທີ່ບໍ່ເປັນລັກສະນະການຄ້າ ແປໃສ່ຮັບໃຊ້ຊີວິດການເປັນຢູ່ຂອງປະຊາຊົນ ທີ່ອາໃສຢູ່ບ້ານລຽບຕາມຊາຍແດນ, ພາຍໃນຂອບເຂດທ້ອງຖິ່ນ ທີ່ມີດ່ານພາສີປະເພນີຕັ້ງຢູ່;

1.2 ວັດຖຸອຸປະກອນຮັບໃຊ້ໃນການຜະລິດກະສິກຳ (ປູກຝັງແລະລ້ຽງສັດ) ຊຶ່ງມີການນຳເຂົ້າບາງຄັ້ງຄາວ ທີ່ໄດ້ຮັບອະນຸຍາດເປັນແຕ່ລະຖ້ຽວ ຈາກຂະແໜງການທີ່ກ່ຽວຂ້ອງ, ເຊັ່ນ : ແນວພັນພືດ, ອາຫານສັດ, ຝຸ່ນວິທະຍາສາດ, ຢາປາບສັດຕູພືດ ແລະ ວັດຖຸອຸປະກອນຮັບໃຊ້ການຜະລິດກະສິກຳ ແລະ ການປະມົງຂອງທ້ອງຖິ່ນ.

4. ຂອບເຂດການນຳໃຊ້ ແລະ ການອະນຸຍາດ

ການອະນຸຍາດສົ່ງອອກ-ນຳເຂົ້າສິນຄ້າ ເຄື່ອງຂອງ ຜ່ານດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ ທີ່ມີທີ່ຕັ້ງຊາຍແດນຫ່າງໄກຈາກດ່ານພາສີສາກົນແມ່ນ ອະນຸຍາດໃຫ້ແຈ້ງພາສີ ເປັນແຕ່ລະຖ້ຽວ ຕາມການອະນຸຍາດຈາກຂະແໜງການກ່ຽວຂ້ອງ ຊຶ່ງມີຈຸດປະສົງນຳເຂົ້າມາຮັບໃຊ້ຊີວິດການເປັນຢູ່ຂອງປະຊາຊົນພາຍໃນຂອບເຂດ ທີ່ມີພູມລຳເນົາອາໃສຢູ່ບ້ານລຽບຕາມຊາຍແດນ, ບໍ່ແມ່ນລັກສະນະທາງການຄ້າ ແລະ ບໍ່ແມ່ນສິນຄ້າຍຸດທະສາດອື່ນໆ.

5. ຂໍ້ຫ້າມໃນການສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງ ຜ່ານດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ

ຫ້າມບໍ່ໃຫ້ປະຊາຊົນບັນດາເຜົ່າ ມີການສົ່ງອອກ-ນຳເຂົ້າ ສິນຄ້າ, ເຄື່ອງຂອງ ຜ່ານດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ ນອກຈາກທີ່ກຳນົດໄວ້ໃນຂໍ້ທີ 1 ແລະ 2 ຂ້າງເທິງຢ່າງເດັດຂາດ. ໃນກໍລະນີ ມີຄວາມຈຳເປັນ ທີ່ຕ້ອງການນຳເຂົ້າສິນຄ້າ, ເຄື່ອງຂອງ ນອກເໜືອຈາກທີ່ລະບຸໄວ້ໃນຂໍ້ທີ 1 ແລະ 2 ຕ້ອງໄດ້ດຳເນີນຂັ້ນຕອນການນຳເຂົ້າສິນຄ້າ, ເຄື່ອງຂອງດັ່ງກ່າວ ຜ່ານດ່ານພາສີສາກົນໃນຂອບເຂດທົ່ວປະເທດ ແລະ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.

6. ການຈັດຕັ້ງປະຕິບັດ

ມອບໃຫ້ຫ້ອງການກະຊວງການເງິນ, ກົມພາສີ, ພະແນກການເງິນຈຳແຂວງ ແລະ ນະຄອນຫຼວງ, ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ບົດແນະນຳສະບັບນີ້ຢ່າງເຂັ້ມງວດ.

7. ຜົນສັກສິດ

ບົດແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮອງນາຍົກລັດຖະມົນຕີ,
ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ

<u>ບ່ອນສົ່ງ:</u>

| | |
|---|---|
| 1. ຮອງລັດຖະມົນຕີກະຊວງການເງິນ ທ່ານ ລະ | 1 ສະບັບ (ໃຊ້ຕາງລາຍງານເພື່ອຊາບ) |
| 2. ຫົວໜ້າຫ້ອງການກະຊວງການເງິນ | 1 ສະບັບ (ໃຊ້ຕາງລາຍງານເພື່ອຊາບ) |
| 3. ຄະນະນຳກົມພາສີ ທ່ານ ລະ | 1 ສະບັບ (ເພື່ອຊາບ) |
| 4. ພະແນກການອ້ອມຂ້າງກົມພາສີ ພະແນກລະ | 1 ສະບັບ (ເພື່ອຕິດຕາມປະຕິບັດ) |
| 5. ບັນດາດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ ດ່ານລະ | 1 ສະບັບ (ເພື່ອຈັດຕັ້ງປະຕິບັດ) |
| 6. ເກັບມ້ຽນ | 1 ສະບັບ |